ສົ່ງ: ທ່ານ ຫົວໜ້າສານັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ

ສຳນັກງານ ຄຄຊ
ສົ່ງ ເລກທີ...965.......
ວັນທີ...16 SEP 2015
ໂທລະສັບ 021 217770

ເລກທີ: 36 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 16 ກັນຍາ 2015

ລາຍງານການເຄື່ອນໄຫວປະຈຳອາທິດ
ທີ 31/08/2015 ຫາ 04/09/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນນັກລົງທຶນມີຄວາມໝັ້ນໃຈຕໍ່ທິດທາງການຟື້ນຕົວທາງດ້ານຂອງເສດຖະກິດສະຫະລັດ ພາຍຫຼັງການຄາດຄະເນຄັ້ງທີ 2 ຂອງຕົວເລກການຂະຫຍາຍຕົວທາງດ້ານເສດຖະກິດຂອງສະຫະລັດຈະຂະຫຍາຍຕົວ 3,7% ໃນໄຕມາດ 2/2015 ຈາກທີ່ຄາດຄະເນກ່ອນໜ້ານີ້ 2,3% ເນື່ອງຈາກຕົວເລກການໃຊ້ຈ່າຍຂອງພາກເອກະຊົນເພີ່ມຂຶ້ນຫຼາຍເກີນຄາດ ແລະ ຕົວເລກຂາຍບ້ານໃໝ່ໃນສະຫະລັດເພີ່ມຂຶ້ນ 5,4% ໃນເດືອນ 7/2015 ຈາກຫຼຸດລົງ 7,7% ໃນເດືອນຜ່ານມາ. ສ່ວນເງິນຢວນ ແລະ ເປໂຊແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກດັດຊະນີຊີ້ນຳທາງເສດຖະກິດຂອງສປ.ຈີນ (Leading Economic Index) ເພີ່ມຂຶ້ນເປັນ 331,2 ໃນເດືອນ 7/2015 ຈາກ 328,2 ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 25/08/2015 | ອາທິດນີ້ 01/09/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1550 | 1,1271 | 2,47% |
| ໂດລາ/ເຢນ | 119,38 | 120,41 | -0,86% |
| ໂດລາ/ບາດ | 35,61 | 35,72 | -0,33% |
| ໂດລາ/ເປໂຊ | 46,69 | 46,68 | 0,01% |
| ໂດລາ/ຣູເປີຍ | 14.062,78 | 14.078,11 | -0,11% |
| ໂດລາ/ໂດລາສິງກະໂປ | 1,4055 | 1,4086 | -0,22% |
| ໂດລາ/ຢວນ | 6,4323 | 6,3681 | 1,01% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 24,32% ຈາກ 38,81 ໂດລາ/ບາເຣວ ມາເປັນ 48,24 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງສະຫະລັດເພີ່ມຂຶ້ນ ຊຶ່ງເຫັນໄດ້ຈາກຄັງສຳຮອງນ້ຳມັນດິບຂອງສະຫະລັດຫຼຸດລົງ 5,45 ລ້ານບາເຣວ ໃນອາທິດທີ 21/8/2015 ຈາກເພີ່ມຂຶ້ນ 2,62 ລ້ານບາເຣວ ໃນອາທິດຜ່ານມາ. ບວກກັບນັກລົງທຶນຄາດວ່າຄວາມຕ້ອງການນ້ຳມັນໃນອະນາຄົດຂອງສະຫະລັດຈະເພີ່ມຂຶ້ນ ພາຍຫຼັງຕົວເລກທາງດ້ານເສດຖະກິດຂອງສະຫະລັດຄາດວ່າຈະອອກມາດີ ດັ່ງທີ່ກ່າວມາຂ້າງເທິງນັ້ນ.

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 1,00% ຈາກ 1.152,77 ໂດລາ/ອອນ ມາເປັນ 1.141,23 ໂດລາ/ອອນ ຍ້ອນນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ ພາຍຫຼັງລາຄາໄດ້ເພີ່ມຂຶ້ນໃນໄລຍະຜ່ານມາ ບວກກັບການແຂງຄ່າຂຶ້ນຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,15% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,03% ສາລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,29% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,53% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 1,09% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 1,76% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 6,20% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 7,56% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 25/08/2015 | | | ອາທິດນີ້ 01/09/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8,146.41 | 8,171.95 | 8,155.52 | 8,157.33 | 8,185.70 | 8,167.54 | -0.134% | -0.17% | -0.15% |
| ບາດ | 232.97 | 234.16 | 233.97 | 232.29 | 233.42 | 233.30 | 0.30% | 0.32% | 0.29% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8,218.50 | 8,298.00 | 8,258.25 | 8,225.00 | 8,287.00 | 8,256.00 | -0.08% | 0.13% | 0.03% |
| ບາດ | 234.64 | 235.63 | 235.14 | 233.05 | 234.77 | 233.91 | 0.68% | 0.37% | 0.53% |
| ຜົດຕ່າງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0.88% | 1.54% | 1.26% | 0.83% | 1.24% | 1.08% | | | |
| ບາດ | 0.72% | 0.63% | 0.50% | 0.33% | 0.58% | 0.26% | | | |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 1,55% ທຽບໃສ່ວັນທີ 28/08/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 44,33%;
- ປະລິມານເງິນ M2 ຫຼຸດລົງ 0,15% ເມື່ອທຽບໃສ່ວັນທີ 28/08/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 21,46%.

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 31/08/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 88,21 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 135,24 ລ້ານໂດລາ ແລະ ຂາຍໂດລາໄດ້ 47,03 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 2.996,42 ລ້ານບາດ (ໃນນີ້ ຊື້ບາດໄດ້ 773,09 ລ້ານບາດ ແລະ ຂາຍບາດໄດ້ 3.769,50 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ຫຼຸດລົງ 8,44% ແຕ່ເພີ່ມຂຶ້ນ 25,18% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 8,92 ລ້ານໂດລາ ແລະ ເງິນບາດມີຈຳນວນ 231,53 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 33,00 ລ້ານໂດລາ ແຕ່ຊື້ບາດທິ ຈຳນວນ 314,50 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 71,30 ລ້ານໂດລາ ແຕ່ ຊື້ບາດໄດ້ສຸດທິ ຈຳນວນ 2.563,08 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 25/08/2015 | | ອາທິດທີ 31/08/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 32,01 | 249,46 | 27,39 | 378,79 | -14,44% | 51,84% |
| - ທ/ຄທຸລະກິດອື່ນໆ | 84,53 | 410,75 | 107,85 | 394,30 | 27,58% | -4,00% |
| ລວມຊື້: | **116,54** | **660,20** | **135,24** | **773,09** | **16,04%** | **17,10%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 55,35 | 192,39 | 24,16 | 199,85 | -56,35% | 3,88% |
| - ທ/ຄທຸລະກິດອື່ນໆ | 27,19 | 2.776,39 | 22,87 | 3.569,66 | -15,89% | 28,57% |
| ລວມຂາຍ: | **82,53** | **2.968,77** | **47,03** | **3.769,50** | **-43,02%** | **26,97%** |
| ຊື້-ຂາຍສຸດທິ ທທກ | **34.01** | **-2.308.57** | **88.21** | **-2.996.42** | **159.40%** | **29.80%** |
| ຜິດດ່ຽງ ຊື້-ຂາຍ | 29,18 | -349,68 | 65,23 | -387,59 | 360,71% | -379,57% |
| ມູນຄ່າການຊື້-ຂາຍ | **199.08** | **3.628.98** | **182.26** | **4.542.59** | **-8.44%** | **25.18%** |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0.00 | 185.00 | 0.00 | 314.50 | | |
| - ທຫລ ຂາຍໃຫ້ ທທກ | 41.33 | 0.00 | 33.00 | 0.00 | | |
| ຊື້-ຂາຍສຸດທິ ທຫລ | **-41.33** | **185,00** | **-33,00** | **314,50** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **1,60** | **46,76** | **8,92** | **231,53** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,77 | 4.351,42 | 0,06 | 2.563,08 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 85,59 | 0,00 | 71,36 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-84,83** | **4.351,42** | **-71,30** | **2.563,08** | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 08/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,09% ຫຼຸດລົງ 0,08% ຈາກ 1,17% ໃນເດືອນ 07/2015 ຍ້ອນລາຄານ້ຳມັນພາຍໃນປະເທດຄາດວ່າຈະຫຼຸດລົງ ແລະ ໝວດອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ ເພີ່ມຂຶ້ນໃນຈັງວະທີ່ຊ້າລົງ ທຽບໃສ່ເດືອນຜ່ານມາ.

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 151,7ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 9,3% ທຽບໃສ່ອາທິດຜ່ານມາ.

2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 833 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 6,93% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 482,97 ຕື້ກີບ ຫຼຸດລົງ 42,71% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (28/08-01/09/2015) ມີຈຳນວນ 1.665 ຄັ້ງ ໂດຍມີມູນຄ່າ 307,68 ຕື້ກີບ ຫຼຸດລົງ 2,12% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທະນາຄານພັດທະນາລາວ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 426 ຄັ້ງ.

2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 1.236,57 ຈຸດ ຫຼຸດລົງ 1,85% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 242.514 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,49 ຕື້ກີບ ຫຼຸດລົງ 91,64% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 56,68% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.492 ກີບ/ຮຸ້ນ ຫຼຸດລົງ 67 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 19.208 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 105,48 ລ້ານກີບ ຫຼຸດລົງ 61,57% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 29,74% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,78%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.294 ກີບ/ຮຸ້ນ ເພີ່ມຂຶ້ນ 33 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 215.401 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,35 ຕື້ກີບ ຫຼຸດລົງ 92,32% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 58,01% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,24%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.867 ກີບ/ຮຸ້ນ ໂດຍມີປະລິມານຊື້-ຂາຍທັງໝົດ 3.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 23,60 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,71%[4].

ຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.866 ກີບ/ຮຸ້ນ ໂດຍມີປະລິມານຊື້-ຂາຍທັງໝົດ 4.905 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 14,05 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,67%[5].

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສໍາເລັດການເຂົ້າຮ່ວມກອງປະຊຸມ: ❶ກອງປະຊຸມປຶກສາຫາລື ເພື່ອຜັນຂະຫຍາຍຜົນສໍາເລັດກອງປະຊຸມ ແລກປ່ຽນບົດຮຽນ ອາຊຽນ-ຈີນ ຄັ້ງທີ 9 ທາງດ້ານການພັດທະນາສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ ທີ່ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ❷ກອງປະຊຸມຄະນະອະນຸກໍາມະການ ຮັບຜິດຊອບຮ່າງດໍາລັດວ່າດ້ວຍການປົກປ້ອງຜູ້ຝາກເງິນ ທີ່ກອງທຶນປົກປ້ອງຜູ້ຝາກເງິນ;
- ສໍາເລັດການຈັດຝຶກອົບຮົມ, ສໍາມະນາ ແລະ ກອງປະຊຸມ: ❶ ຝຶກອົບຮົມ ໃນຫົວຂໍ້: ບັນຊີໃໝ່ຂອງ ທຫລ ແລະ ບັນຊີພົວພັນ" ທີ່ທະນາຄານແຫ່ງ ສປປ ລາວ, ❷ສໍາມະນາວຽກງານລະບົບ Core Banking ຮ່ວມກັບບໍລິສັດ CSCC ແລະ ❸ກອງປະຊຸມເຜີຍແຜ່ເງື່ອນໄຂ ຂອງການເຂົ້າເຖິງແຫຼ່ງທຶນ ແລະ ສໍາມະນາກ່ຽວກັບແບບຟອມ ຂອງກອງທຶນສົ່ງເສີມການເຂົ້າເຖິງການບໍລິການ ການເງິນທີ່ຫຼາກຫຼາຍ ແລະ ທົ່ວເຖິງ (FIF) ທີ່ພາກໃຕ້ ແຂວງຈໍາປາສັກ, ❹ສໍາເລັດຮ່າງເກັບກ່ຽວຜົນງານລວມ ຂອງ ທຫລ ໄລຍະ 10 ປີ (2005-2015) ເພື່ອຂໍການຍ້ອງຍໍ ເນື່ອງໃນໂອກາດສະເຫຼີມສະຫຼອງ 2 ວັນປະຫວັດສາດ ປີ 2015.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ງວດ 5 ຊຸດ 2 ຈໍານວນ 30 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2, ❷ຄົ້ນຄວ້າຮ່າງລະບຽບກ່ຽວກັບການຢຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຍັດຕິ 1267,1373 ຂອງສະພາຄວາມໝັ້ນຄົງ ສປຊ, ❸ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❹ຄົ້ນຄວ້າຮ່າງດໍາລັດວ່າດ້ວຍ ປົກປ້ອງຜູ້ບໍລິໂພກທາງການເງິນ, ❺ຄົ້ນຄວ້າລະບຽບວ່າດ້ວຍ Finance Service Provider;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ສືບຕໍ່ປັບປຸງຮ່າງດໍາລັດວ່າດ້ວຍລະບົບຊໍາລະແຫ່ງຊາດ ຮ່ວມກັບຄະນະຮັບຮອງຮ່າງດໍາລັດ ຂອງ ທຫລ;
- ສືບຕໍ່ການຝຶກຊ້ອມໃຫ້ພ້ອມພຽງກັນຂອງກ້ອນກໍາລັງ ທີ່ສະຖາບັນການທະນາຄານ ເພື່ອກະກຽມໃນພິທີສະເຫຼີມສະຫຼອງ 2 ວັນປະຫວັດສາດປີ 2015 ໃນວັນທີ 2 ທັນວາ 2015.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ພາສີ ພົມມະກອນ